ການແລກປ່ຽນດ້ານຮູບພາບໄດ້ກາຍເປັນຂົວທອງຄຳທີ່ເຊື່ອມຕໍ່ລະຫວ່າງປະຊາຊົນ ທີ່ຢູ່ລຸ່ມແມ່ນຳ້ລ້ານຊ້າງ-ແມ່ນຳ້ຂອງ

ທ່ານ ນາງ ຈ້າວ ຊູຫຼານ ສາດສະດາຈານ ຫົວໜ້າສະຖາບັນຄົ້ນຄວ້າປະເທດລາວຂອງສະຖາບັນຄົ້ນຄວ້າອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້, ນະຄອນຄຸນໝິງ, ສປ ຈີນ.

ທ່ານ ນາງ ເຕົ້ງ ຢູນເພີຍ ຮອງສາດສະດາຈານ ຂອງສະຖາບັນຄົ້ນຄວ້າອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້ນະຄອນຄຸນໝິງ, ສປ ຈີນ

ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງແມ່ນມີຕົ້ນກຳເນີດມາຈາກຕີນພູທາງເໜືອຂອງພູເຂົາຖັງກູ້ລາໃນເມືອງຈາຕົວ, ຂອງກິ່ງແຂວງປົກຄອງຕົນເອງ ຊົນເຜົ່າທິເບດ ອຸຍຂູ, ແຂວງຊິງຫາຍ, ສປ ຈີນ, ໄຫຼຜ່ານນະຄອນຊາງຕູ, ເຂດປົກຄອງຕົນເອງທິເບດ, ເຂົ້າສູ່ເຂດພູດອຍທາງທິດຕາເວັນຕົກຂອງແຂວງຢຸນນານ, ໄປຮອດທິດຕາເວັນຕົກສ່ຽງເໜືອຂອງເມືອງເມິງລ່າເມິງເຜິງ, ແຂວງຢຸນນານ ແລະ ໄຫຼອອກຈາກປະເທດ ໂດຍຜ່ານມຽນມາ, ລາວ, ໄທ, ກຳປູເຈຍ ແລະ ຫວຽດນາມ. ຄວາມຍາວທັງໝົດຂອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງແມ່ນ 4.880 ກິໂລແມັດ, ມີເນື້ອທີ່ທັງໝົດປະມານ 800.000 ກິໂລຕາແມັດ, ປະລິມານນ້ຳທີ່ໄຫຼລົງສູ່ທະເລ ຫຼາຍເຖິງ 8 ເທົ່າຂອງແມ່ນ້ຳເຫຼືອງ, ເຮັດໃຫ້ເປັນແມ່ນ້ຳທີ່ຍາວທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້. ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ຫຼໍ່ລ້ຽງປະຊາຊົນຂອງບັນດາປະເທດທີ່ຢູ່ລຽບແຄມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງອຸດົມໄປດ້ວຍຊັບພະຍາກອນ ແລະ ເປັນ "ແມ່ນ້ຳສາຍຫຼັກ" ແລະ "ແຫຼ່ງອາຫານຂອງໂລກ" ໂດຍຖືເອົາການຮ່ວມມືດ້ານກະສິກຳລະຫວ່າງປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງເປັນຕົວຢ່າງ, ຍ້ອນສະພາບແວດລ້ອມ ແລະ ແຫຼ່ງຊັບພະຍາກອນທີ່ເປັນເອກະລັກສະເພາະ, ພາຍໃຕ້ການຊຸກຍູ້ຂອງກົນໄກການຮ່ວມມືຂອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ການຮ່ວມມືດ້ານກະສິກຳກໍນັບມື້ນັບມີຄວາມຄືບໜ້າທີ່ດີຂຶ້ນ, ການຄ້າຜະລິດຕະພັນກະເສດ, ໝາກໄມ້ ແລະ ພືດຜັກກໍນັບມື້ນັບຂະຫຍາຍຕົວຂຶ້ນ. ປີ 2023, ຈີນໄດ້ກາຍເປັນຕະຫຼາດສົ່ງອອກກະສິກຳທີ່ໃຫຍ່ທີ່ສຸດຂອງຫວຽດນາມ, ການສົ່ງອອກດ້ານກະສິກຳຂອງຫວຽດນາມໄປຈີນ ເພີ່ມຂຶ້ນ 17% ເມື່ອທຽບໃສ່ປີ 2022, ກວມ 23% ຂອງຍອດມູນຄ່າການສົ່ງອອກກະສິກຳທັງໝົດຂອງຫວຽດນາມ; ຈີນສືບຕໍ່ເປັນຕະຫຼາດສົ່ງອອກກະສິກຳທີ່ໃຫຍ່ທີ່ສຸດຂອງໄທ, ການສົ່ງອອກສິນຄ້າກະສິກຳຂອງ ໄທໄປຈີນ ໃນປີ 2023 ບັນລຸ 387,118 ຕື້ບາດ, ກວມເອົາ 41,92% ຂອງການສົ່ງອອກສິນຄ້າກະສິກຳທັງໝົດຂອງໄທ, ເພີ່ມຂຶ້ນ 6,19% ເມື່ອທຽບໃສ່ປີ 2022; ຈີນຍັງກາຍເປັນຄູ່ຄ້າສິນຄ້າກະສິກຳ ແລະ ຕະຫຼາດສົ່ງອອກໃຫຍ່ທີ່ສຸດຂອງກຳປູເຈຍສຳລັບສິນຄ້າປະເພດເຂົ້າສານ ແລະ ຢາງພາລາ. ພ້ອມດຽວກັນນັ້ນ, 5 ປະເທດລຸ່ມແມ່ນ້ຳຂອງໄດ້ກາຍເປັນແຫຼ່ງນຳເຂົ້າເຂົ້າສານທີ່ເປັນຕົ້ນຕໍຂອງຈີນ. ໃນປີ 2023, ຫວຽດນາມ, ມຽນມາ, ໄທ ແລະ ກຳປູເຈຍໄດ້ສົ່ງອອກເຂົ້າສານ 934.700 ໂຕນ, 541.000 ໂຕນ, 461.700 ໂຕນ ແລະ 209.400 ໂຕນ ໄປຈີນຕາມລຳດັບ, ກາຍເປັນປະເທດນຳເຂົ້າເຂົ້າສານໃຫຍ່ອັນດັບໜຶ່ງ, ສອງ, ສາມ ແລະ ຫ້າຂອງຈີນ. ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງເປັນແລວທາງວັດທະນະທຳຫຼາຍຊົນເຜົ່າມາແຕ່ບູຮານນະການ. ຊື່ພາສາອັງກິດຂອງແມ່ນ້ຳຂອງແມ່ນ "Mekong" ຊຶ່ງມາຈາກຄຳຫຍໍ້ຂອງພາສາໄທ "ແມ່ນ້ຳໂຂງ" ທີ່ແປວ່າແມ່ນ້ຳສາຍຫຼັກ ແລະ ມີຄວາມໝາຍວ່າແມ່ນ້ຳໃຫຍ່. ນັບແຕ່ສະໄໝບູຮານມາ, ແມ່ນ້ຳແຫ່ງນີ້ໄດ້ໃຫ້ກຳເນີດອາລິຍະທຳອັນເກົ່າແກ່ ແລະ ສວຍສົດງົດງາມ ແລະ ໄດ້ຮັບການຍອມຮັບວ່າແມ່ນແມ່ນ້ຳສາຍຫຼັກຂອງຫຼາຍຊົນເຜົ່າຢູ່ພາກຕາເວັນຕົກສ່ຽງໃຕ້ຂອງຈີນ ແລະ ອາຊີຕາເວັນອອກສ່ຽງໃຕ້ ແລະ ຍັງແມ່ນ "ເສັ້ນທາງນ້ຳທອງຄຳ" ໃຫ້ແກ່ປະຊາຊົນຂອງບັນດາປະເທດລຽບຕາມແຄມແມ່ນ້ຳ ເພື່ອການພົວພັນທາງດ້ານເສດຖະກິດ, ການຄ້າ, ການທ່ອງທ່ຽວ ແລະ ການໄປມາຫາສູ່ກັນ, ມິດຕະພາບທີ່ມີມາແຕ່ດົນນານ, ແມ່ນແລວທາງວັດທະນະທຳຂອງຫຼາຍຊົນເຜົ່າທີ່ມີມາແຕ່ດົນນານ, ມີລັກສະນະດ້ານອາລະຍະທຳທີ່ພົ້ນເດັ່ນ. ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ໃຫ້ກຳເນີດວັດທະນະທຳທີ່ເປັນເອກະລັກສະເພາະ, ແຕ່ມີຄວາມຄ້າຍຄືກັນຂອງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. **ຕົວຢ່າງເຊັ່ນ**: ບຸນທິດນ້ຳເປັນບຸນສຳຄັນຂອງຊາວເຜົ່າລື້, ອາຊາງ, ເຕີອາງ, ບູລາງ ແລະ ຊົນເຜົ່າອື່ນໆ ໃນປະເທດຈີນ ແລະ ຍັງເປັນບຸນທີ່ສຳຄັນທີ່ສຸດຢູ່ປະເທດໄທ, ມຽນມາ, ລາວ ແລະ ກຳປູເຈຍ. ບັນດາຊົນເຜົ່າຢູ່ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງມີ "ຕົ້ນກຳເນີດອັນດຽວກັນ, ແຕ່ມີເສັ້ນທາງທີ່ແຕກຕ່າງກັນ", ດ້ານວັດທະນະທຳມີການປະສົມປະສານກັນ ແລະ ເປັນມູນເຊື້ອຂອງສາຍພົວພັນມິດຕະພາບ ແລະ ຄວາມຊົງຈຳທາງພັນທຸກຳລະຫວ່າງບັນດາເຜົ່າໄດ້ກາຍເປັນພື້ນຖານອັນເລິກເຊິ່ງຂອງການຮ່ວມມື ແລະ ພັດທະນາບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ໃນຊຸມປີມໍ່ໆມານີ້, ການແລກປ່ຽນທາງດ້ານວັດທະນະທຳ ລະຫວ່າງ 6 ປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ມີການພັດທະນາຢ່າງຕັ້ງໜ້າ. ໃນເດືອນມີນາປີ 2016, ກອງປະຊຸມການຮ່ວມມືຂອງຜູ້ນຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງທຳອິດ ໄດ້ຈັດຂຶ້ນຢູ່ເມືອງຊານຢາ, ແຂວງໄຫໜານຢ່າງສຳເລັດຜົນ ແລະ "ຖະແຫຼງການຊານຢາຂອງກອງປະຊຸມການຮ່ວມມືຂອງຜູ້ນຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງທຳອິດ: ສ້າງປະຊາຄົມຮ່ວມຊາຕາກຳໃຫ້ແກ່ບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ເພື່ອສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງ", ໄດ້ປະກາດວ່າກົນໄກການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ເລີ່ມຂຶ້ນຢ່າງເປັນທາງການ. ໃນ 8 ປີຜ່ານມາ, ການພົບປະແລກປ່ຽນລະຫວ່າງປະຊາຊົນ ແລະ ວັດທະນະທຳລະຫວ່າງ 6 ປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ມີການພັດທະນາຢ່າງຕັ້ງໜ້າ, ການເຄື່ອນໄຫວດ້ານວັດທະນະທຳໄດ້ເກີດຂຶ້ນຕາມລຳດັບ, ໄດ້ບັນລຸຢ່າງຮອບດ້ານ ແລະ ໄດ້ກວມເອົາຫຼາຍຂົງເຂດ. ທາງດ້ານສື່ມວນຊົນ ປະກອບມີສັບປະດາຮູບພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ສັບປະດາພາບຖ່າຍ ແລະ ສຽງສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ສັບປະດາຮູບເງົາສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ອື່ນໆ, ທາງດ້ານການແລກປ່ຽນຊາວໜຸ່ມປະກອບມີສູນຝຶກອົບຮົມການແຂ່ງຂັນທົວຄິດປະດິດສ້າງຂອງນັກທຸລະກິດແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ທາງດ້ານການທ່ອງທ່ຽວກໍມີເວທີຮ່ວມມືເມືອງແຫ່ງການທ່ອງທ່ຽວແຫ່ງຊາດ ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ (ຊານຍາ), ມີພັນທະພາບການຮ່ວມມືຕົວເມືອງທ່ອງທ່ຽວແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ອື່ນໆ, ໃນດ້ານການສຶກສາກໍມີວິທະຍາໄລວິຊາຊີບນາໆຊາດແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ສູນຝຶກອົບຮົມວິຊາຊີບແມ່ນ້ຳລ້ານຊ້າງ- ແມ່ນ້ຳຂອງ ແລະ ອື່ນໆ. ທາງດ້ານການແພດ, ໂຄງການຮ່ວມມື ໂດຍມີ "ໂຄງການແສງສະຫວ່າງ" ແລະ "ໂຄງການດ້ານຈິດໃຈ" ເປັນຕົວແບບໄດ້ຝຶກອົບຮົມບຸກຄະລາກອນດ້ານສາທາລະນະສຸກເປັນຈຳນວນຫຼາຍ. ນອກນັ້ນ, ພາກສ່ວນຕ່າງໆ ໃນສັງຄົມກໍໄດ້ຈັດຕັ້ງງານມະໂຫລານສິລະປະວັດທະນະທຳ ຂອງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ງານແຂ່ງຂັນອອກແບບສິລະປະສາກົນ ພາຍໃຕ້ການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ການເຄື່ອນໄຫວພົບປະແລກປ່ຽນດ້ານວັດທະນະທຳວັນປີໃໝ່ຂອງ 6 ປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ກິດຈະກຳ "ສັບປະດາແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ" ທີ່ຫຼາຍມະຫາວິທະຍາໄລໄດ້ຈັດຕັ້ງຂຶ້ນກໍໄດ້ເພີ່ມທະວີການພົວພັນ ແລະ ແລກປ່ຽນລະຫວ່າງກຸ່ມຊາວໜຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ຄວາມຫຼາກຫຼາຍຂອງບັນດາທົວໜ່ວຍທີ່ເປັນເຈົ້າພາບ ແລະ ບັນດາຂົງເຂດໄດ້ສະແດງໃຫ້ເຫັນວ່າ: ພາຍໃຕ້ກົນໄກຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ການແລກປ່ຽນດ້ານວັດທະນະທຳລະຫວ່າງ 6 ປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ໄດ້ຮັບໝາກຜົນຢ່າງຕັ້ງໜ້າ ແລະ ການຮ່ວມມືນັບມື້ນັບແທດເໝາະກັບສະພາບຕົວຈິງ. ພາຍໃຕ້ສະພາບການປ່ຽນແປງອັນໃຫຍ່ຫຼວງທີ່ບໍ່ເຄີຍພົບເຫັນມາກ່ອນໃນໜຶ່ງສະຕະວັດ, ພວກເຮົາໄດ້ສຸມໃສ່ອະນາຄົດຂອງປະຊາຊົນຂອງບັນດາປະເທດໃນພາກພື້ນ, ນຳໃຊ້ຮູບພາບ, ເປັນວິທີທີ່ມີຄວາມເຂົ້າໃຈຫຼາຍກວ່າເກົ່າ ເພື່ອນຳສະເໜີການພັດທະນາຂອງປະຫວັດສາດ, ສັງຄົມ ແລະ ປະຊາຊົນ ຊຶ່ງມີອິດທິພົນດ້ານການເປັນແຮງບັນດານຈິດໃຈ ແລະ ການຊັກຊວນ ແລະ ເຮັດໃຫ້ມີຄວາມເຫັນອົກເຫັນໃຈໄປພ້ອມໆກັນ. **ຕົວຢ່າງເຊັ່ນ**: ສັບປະດາຮູບພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ສັບປະດາຮູບເງົາ ແລະ ໂທລະພາບ ແລະ ສັບປະດາພາບ-ສຽງ, ໄດ້ສຸມໃສ່ດ້ານຮູບເງົາ, ໂທລະພາບ ແລະ ຮູບພາບຂອງປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ສະແດງໃຫ້ເຫັນເຖິງລະບົບນິເວດທຳມະຊາດ, ລັກສະນະວັດທະນະທຳຂອງມະນຸດ, ຮີດຄອງປະເພນີພື້ນເມືອງ ແລະ ທົວຂໍ້ອື່ນໆ, ເຮັດໃຫ້ສື່ມວນຊົນ, ຊ່າງພາບ, ນັກການທູດ ແລະ "ຄົນລຸ້ນ Z" ທີ່ເຂົ້າຮ່ວມໄດ້ເຂົ້າໃກ້ຊີວິດການເປັນຢູ່ຂອງປະຊາຊົນຢູ່ລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ສຳຜັດກັບຄວາມສວຍງາມທາງທຳມະຊາດທີ່ໜ້າອັດສະຈັນແບບໃກ້ຊິດ ແລະ ນຳໃຊ້ຮູບພາບ ເພື່ອສະແດງໃຫ້ເຫັນເຖິງຄວາມເປັນຈິນທີ່ແທ້ຈິງສູ່ສາກົນ. ໃນເດືອນທັນວາປີ 2023, "ສັບປະດາຮູບພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ" ໄດ້ຖືກຈັດເຂົ້າໃນຖະແຫຼງການນະຄອນຫຼວງເນປີດໍຂອງກອງປະຊຸມການຮ່ວມມືຂອງຜູ້ນຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຄັ້ງທີ 4, ໄດ້ຊຸກຍູ້ການສືບຕໍ່ຈັດສັບປະດາຮູບພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ເພື່ອເພີ່ມທະວີຄວາມເຂົ້າໃຈ ແລະ ຄວາມໄວ້ເນື້ອເຊື່ອໃຈລະຫວ່າງປະຊາຊົນ 6 ປະເທດ ໂດຍສະເພາະ, ການແລກປ່ຽນດ້ານຮູບພາບ, ວີດີໂອ ແລະ ຮູບເງົາ ລະຫວ່າງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ໄດ້ມີການສື່ສານ ແລະ ການພົວພັນກັນຜ່ານບັນດາຜະລິດຕະພັນທາງການເບິ່ງຊົມທີ່ຫຼາກຫຼາຍ, ເປັນວິທີທີ່ດີເລີດທີ່ສາມາດຜ່ານຜ່າອຸປະສັກທາງດ້ານພາສາ ແລະ ສິ່ງກີດຂວາງທາງດ້ານວັດທະນະທຳ, ສິ່ງເສີມຄວາມເຂົ້າໃຈ ແລະ ການສົນທະນາແລກປ່ຽນລະຫວ່າງວັດທະນະທຳທີ່ແຕກຕ່າງກັນ, ເປັນການປະຕິບັດຕົວຈິງຂອງຂໍ້ລິເລີ່ມດ້ານອາລິຍະທຳທົ່ວໂລກທີ່ຈີນໄດ້ສະເໜີຂຶ້ນ. ກິດຈະກຳແລກປ່ຽນດ້ານຮູບພາບ, ວີດີໂອ ແລະ ຮູບເງົາ ລະຫວ່າງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ບໍ່ພຽງແຕ່ສະແດງໃຫ້ເຫັນເຖິງຄວາມເປັນເອກະລັກສະເພາະ ແລະ ຄວາມຫຼາກຫຼາຍຂອງວັດທະນະທຳເທົ່ານັ້ນ, ໃຫ້ຜູ້ຊົມໄດ້ສຳຜັດກັບສະເໜ່ຂອງອາລິຍະທຳທີ່ແຕກຕ່າງກັນ, ຫາກຍັງຊ່ວຍຊຸກຍູ້ໃຫ້ປະຊາຊົນຂອງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງມີຄວາມຮັບຮູ້ກ່ຽວກັບການເຄົາລົບຄວາມຫຼາກຫຼາຍດ້ານວັດທະນະທຳໃນໂລກອີກດ້ວຍ ແລະ ສິ່ງຜົນໃຫ້ມີການພັດທະນາດ້ານອາລິຍະທຳໃນທົ່ວໂລກ. ຄຽງຄູ່ກັນນັ້ນ, ດ້ວຍການຜະລິດ ແລະ ແບ່ງປັນບັນດາຜະລິດຕະພັນທີ່ມີຄ່ານິຍົມລວມຄື: ສັນຕິພາບ, ພັດທະນາ, ຍຸຕິທຳ, ເສລີພາບ, ແມ່ນສາມາດຊຸກຍູ້ການສ້າງຄວາມສາມັກຄີທາງດ້ານຄຸນຄ່າລະຫວ່າງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ປະກອບສ່ວນກໍ່ສ້າງປະຊາຄົມຮ່ວມຊາຕາກຳຂອງບັນດາປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ນອກນັ້ນ, ຍັງໄດ້ນຳໃຊ້ຮູບພາບ, ຮູບເງົາ ແລະ ໂທລະພາບ ເພື່ອບັນທຶກ ແລະ ເຜີຍແຜ່ບັນດາມໍລະດົກທາງປະຫວັດສາດ ແລະ ວັດທະນະທຳອັນເປັນເອກະລັກຂອງບັນດາປະເທດ, ຊຸກຍູ້ໃຫ້ທຸກພາກສ່ວນຮ່ວມແຮງຮ່ວມໃຈກັນປົກປັກຮັກສາມໍລະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດຂອງປະເທດ ລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໃຫ້ວັດທະນະທຳພື້ນເມືອງກັບມາມີຄວາມຟົດຟື້ນ, ແມ່ນຄວາມໝາຍທີ່ແທ້ຈິງຂອງການສືບທອດດ້ານອາລິຍະທຳ ແລະ ການປະດິດສ້າງໃໝ່ ໂດຍຜ່ານວິທີການຕ່າງໆເຊັ່ນ: ສັບປະດາຮູບພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ສັບປະດາຮູບເງົາ ແລະ ໂທລະພາບ, ເຮັດໃຫ້ບັນດາຜູ້ຜະລິດຈາກ 6 ປະເທດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ຮ່ວມກັນເລົ່າເລື່ອງຂອງມໍລະດົກທາງດ້ານວັດທະນະທຳ ແລະ ການພັດທະນາຂອງສັງຄົມຂອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຈະຊ່ວຍໃຫ້ການຮ່ວມມືຂົງເຂດແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງເຂົ້າເຖິງຈິດໃຈຂອງປະຊາຊົນ ແລະ ຍັງໄດ້ເຮັດໃຫ້ຂໍ້ລິເລີ່ມດ້ານອາລິຍະທຳທົ່ວໂລກໄດ້ຮັບການຜັນຂະຫຍາຍໃນຂົງເຂດການແລກປ່ຽນທາງດ້ານວັດທະນະທຳ ແລະ ເຮັດໃຫ້ແຕກດອກອອກຜົນຍິ່ງຂຶ້ນ.